ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 29 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 22 JUL 2016

ສຳນັກງານ ຄຄຊ
ເລກທີ 0710
ວັນທີ 22 JUL 2016
ໂທລະສັບ 021 217770

## ບົດບັນທຶກກອງປະຊຸມ
## ສ່ອງແສງວຽກງານສາຍລັດ ປະຈຳເດືອນ ມິຖຸນາ ປີ 2016

ໃນຕອນເຊົ້າຂອງວັນທີ 6 ກໍລະກົດ 2016 ເວລາ 10:00 ໂມງ ໄດ້ມີການຈັດກອງປະຊຸມສ່ອງແສງວຽກງານສາຍລັດ ປະຈຳເດືອນ ມິຖຸນາ ປີ 2016 ຂຶ້ນ ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທະນາຄານແຫ່ງ ສປປ ລາວ ພາຍໃຕ້ການເປັນປະທານໂດຍທ່ານ **ດຣ. ສົມພາວ ໄຟສິດ** ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີບັນດາຄະນະກົມ, ທຽບເທົ່າກົມ, ຄະນະອຳນວຍການຈາກບັນດາທະນາຄານທຸລະກິດລັດ (ທທກ) ແລະ ຜູ້ຕາງໜ້າບັນດາກົມເຂົ້າຮ່ວມ ລາຍລະອຽດດັ່ງລາຍຊື່ທີ່ໄດ້ຄັດຕິດມາພ້ອມນີ້.

ຜ່ານການລາຍງານຈາກບັນດາກົມ, ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ ທ່ານ ປະທານກອງປະຊຸມ ໄດ້ມີທິດທາງແກ້ໄຂວຽກງານຫຼາຍບັນຫາຕາມການລາຍງານ ແລະ ການສະເໜີຈາກແຕ່ລະພາກສ່ວນ ດັ່ງນີ້:

### I. ສະພາບການລາຍງານທີ່ພົ້ນເດັ່ນ

ໂດຍລວມສະພາບການເຄື່ອນໄຫວວຽກງານ 1 ເດືອນຜ່ານມາເຫັນວ່າບັນດາກົມ, ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ ສາມາດປະຕິບັດໜ້າທີ່ການເມືອງຂອງຕົນໄດ້ຕາມແຜນການທີ່ວາງໄວ້ ທະນາຄານແຫ່ງ ສປປ ລາວ ຍັງຮັກສາໄດ້ສະຖຽນລະພາບເງິນຕາແຫ່ງຊາດໄດ້ຢ່າງໝັ້ນທ່ຽງບໍ່ມີສະພາບຫຍໍ້ທໍ້ທີ່ພົ້ນເດັ່ນ ຍົກເວັ້ນບາງທະນາຄານທຸລະກິດທີ່ມີໜີ້ບໍ່ເກີດດອກອອກຜົນຍັງສູງຢູ່ ແຕ່ບັນດາທະນາຄານທຸລະກິດກໍໄດ້ເອົາໃຈໃສ່ເກັບກູ້ໜີ້ສິນຢ່າງຕັ້ງໜ້າເຮັດໃຫ້ການແກ້ໄຂໜີ້ທີ່ບໍ່ເກີດດອກອອກຜົນເປັນໄປໃນທາງທີ່ດີຂຶ້ນ. ທະນາຄານທຸລະກິດລັດກໍ່ກຳລັງປັບປຸງການບໍລິການ-ການທັນເປັນທັນສະໄໝ.

### II. ຄຳເຫັນຕໍ່ກັບບັນດາຂໍ້ສະເໜີຂອງບັນດາກົມ

1. ເຫັນດີໃຫ້ກົມນະໂຍບາຍເງິນຕາປັບປຸງຫຼຸດອັດຕາດອກເບ້ຍນະໂຍບາຍ ເພື່ອເປັນການຊ່ວຍຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ແລະ ການເຂົ້າເຖິງແຫຼ່ງທຶນຂອງຫົວໜ່ວຍທຸລະກິດ;
2. ໃຫ້ໂຮງພິມພັນທະບັດ ທຫລ ໃຫ້ເອົາໃຈໃສ່ສັງລວມບັນດາເຈ້ຍພິມໃຫ້ມີການນຳໃຊ້ທີ່ຖືກຕ້ອງເໝາະສົມ, ຫ້າມເດັດຂາດບໍ່ໃຫ້ນຳເອົາເຈ້ຍພິມພັນທະບັດເອົາໄປພິມຢູ່ຂ້າງນອກ, ສ່ວນນ້ຳມຶກໃຫ້ມີການແຕ່ງຕັ້ງຄະນະກຳມະການຮັບຜິດຊອບຂຶ້ນມາ ເພື່ອທຳລາຍມຶກດັ່ງກ່າວ, ສ່ວນແມ່ພິມແມ່ນໃຫ້ເກັບຮັກສາໄວ້ໃຫ້ດີ;
3. ໃຫ້ທະນາຄານສົ່ງເສີມກະສິກຳເອົາໃຈໃສ່ຕິດຕາມສະພາບນັກລົງທຶນ ຕ່າງປະເທດທີ່ມາຂໍເປີດບັນຊີ ໃຫ້ປະຕິບັດຕາມລະບຽບການຢ່າງເຂັ້ມງວດ ແລະ ປະສານກັບ ສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອໃຫ້ຮູ້ວ່ານັກລົງທຶນດັ່ງກ່າວຢູ່ໃນເປົ້າໝາຍຟອກເງິນຫຼືບໍ່;
4. ເຫັນດີໃຫ້ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ປັບປຸງວຽກງານລະບົບບັນຊີ ແຍກໃບຖານະການເງິນຂອງສູນໃຫ້ຈະແຈ້ງ ສ່ວນແຜນແຍກຕົວເປັນເອກະລາດໃຫ້ໂຈະໄວ້ກ່ອນ ພ້ອມນີ້ກໍ່ໃຫ້ປັບປຸງຖານະການເງິນຂອງຕົນໃຫ້ດີຂຶ້ນ.

III. ທິດຊີ້ນຳວຽກງານໃນເດືອນຕໍ່ໄປ

1. ສືບຕໍ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໜັກແໜ້ນ ກະກຽມບັນດາເງື່ອນໄຂໃນການປະກາດໃຊ້ອັດຕາດອກເບ້ຍນະໂຍບາຍ ແລະ ຮັບປະກັນບໍ່ໃຫ້ເກີດຜົນກະທົບຕໍ່ສະພາບເສດຖະກິດ, ຮັກສາໄດ້ອັດຕາແລກປ່ຽນໃຫ້ມີການເຄື່ອນໄຫວໃນຂອບເຂດທີ່ກຳນົດໄວ້. ທຫລ ຊຸກຍູ້ທະນາຄານທຸລະກິດລັດທີ່ມີຂໍ້ຈຳກັດໃນການປ່ອຍກູ້ແຕ່ມີແຫຼ່ງທຶນເຫຼືອຢູ່ໃຫ້ມີສ່ວນຮ່ວມໃນການຊື້ພັນທະບັດຂອງກະຊວງການເງິນ ເພື່ອຊຸກຍູ້ໃຫ້ຕະຫຼາດເປີດສາມາດຈັດຕັ້ງປະຕິບັດໄດ້ໃຫ້ປົກກະຕິ; ແລະ ພັນທະບັດໃຫ້ສາມາດປ່ຽນມືໄດ້-ບໍ່ຄວນປະໄວ້ໃນບັນຊີຊຳລະສະສາງ;
2. ໃຫ້ສືບຕໍ່ຕິດຕາມດຳລັດວ່າດ້ວຍທຸລະກິດຊວດຈຳ ນຳລັດຖະບານ ເມື່ອມີການລົງລາຍເຊັນຮັບຮອງແລ້ວຕ້ອງໄດ້ເອົາໃຈໃສ່ຈັດຕັ້ງເຜີຍແຜ່ຂະຫຍາຍເຜີຍແຜ່ດຳລັດດັ່ງກ່າວໃຫ້ສັງຄົມຮັບຊາບ ແລະ ເຂົ້າໃຈ ລວມທັງດຳລັດວ່າດ້ວຍການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ດ້ວຍ;
3. ສຳຫຼັບວຽກງານ 3 ສ້າງຂອງລັດຖະບານທີ່ໄດ້ມອບໝາຍໃຫ້ແຕ່ລະກະຊວງຜັນຂະຫຍາຍ ເຂົ້າໃນວຽກງານຈັດຕັ້ງປະຕິບັດຕົວຈິງນັ້ນ ສະເພາະຂະແໜງທະນາຄານແມ່ນໃຫ້ຜັນຂະຫຍາຍສະໜອງສິນເຊື່ອໃຫ້ກວ້າງຂວາງນັ້ນມອບໃຫ້ກອງເລຂາ, ທະນາຄານນະໂຍບາຍ ຮ່ວມກັບກະຊວງພາຍໃນ, ກະຊວງກະສິກຳ ຈັດກອງປະຊຸມປຶກສາຫາລືຄວາມອາດສາມາດຂະຫຍາຍວຽກງານສິນເຊື່ອໃນຂອບເຂດແຕ່ລະປີໄດ້ແນວໃດ ພ້ອມກັນນັ້ນກໍໃຫ້ບັນດາທະນາຄານທຸລະກິດລັດໃຫ້ເອົາໃຈໃສ່ ບັນດາບຸກຄົນທີ່ສອຍໃຊ້ຄຳສັ່ງເລກທີ 15/ນຍ ໃນການຂໍກູ້ຢືມເງິນເພື່ອຂະຫຍາຍໂຮງງານປຸງແຕ່ງໄມ້ທີ່ຕິດພັນກັບຄຳສັ່ງດັ່ງກ່າວ;
4. ໃຫ້ທະນາຄານທຸລະກິດເອົາໃຈໃສ່ເກັບກູ້ໜີ້ສິນຂອງຕົນເອງ ສົ່ງເສີມຄວາມໂປ່ງໃສວຽກງານສິນເຊື່ອ ພ້ອມທັງກຳນົດນະໂຍບາຍສິນເຊື່ອຂອງຕົນໃຫ້ຊັດເຈນ ຍົກສູງຄວາມຮັບຜິດຊອບຕໍ່ການປ່ອຍສິນເຊື່ອໃນວຽກງານພັດທະນາເສດຖະກິດໃຫ້ກັບບັນດາໂຄງການທີ່ມີປະສິດທິຜົນ;
5. ກົມຄຸ້ມຄອງທະນາຄານທຸລະກິດ ກັບກົມຄຸ້ມຄອງສະຖາບັນການເງິນຄົ້ນຄວ້າອອກແຈ້ງການໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ລາຍງານກ່ຽວກັບແຫຼ່ງທຶນຂອງບັນດາຂາຮຸ້ນໃຫ້ລະອຽດຈະແຈ້ງສາມາດຮູ້ທີ່ມາທີ່ໄປຂອງແຫຼ່ງທຶນລັກແນ່; ພ້ອມດຽວກັນນັ້ນກໍໃຫ້ທະນາຄານນະໂຍບາຍສົມທົບກັບກົມຄຸ້ມຄອງສະຖາບັນການເງິນ ເພື່ອຄົ້ນຄວ້າວຽກງານສິນເຊື່ອນະໂຍບາຍໃຫ້ເຈືອຈານກັບກອງທຶນໝູ່ບ້ານທີ່ມີ ໂດຍເລີ່ມຈາກກອງທຶນໝູ່ບ້ານທີ່ທະນາຄານນະໂຍບາຍມີສາຂາຢູ່ກ່ອນ ເພື່ອຖອດຖອນບົດຮຽນ;
6. ຂໍໃຫ້ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳໃຫ້ຄວາມຮ່ວມມືໃນການປຶກສາຫາລືກັບຄະນະສະເພາະກິດໃນທຸກດ້ານໂດຍສະເພາະວຽກງານປັບປຸງລະບົບ IT; ລວມທັງການປັບປຸງໂຄງສ້າງທະນາຄານທຸລະກິດທັງສອງແຫ່ງ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດຮ່າງຈົດໝາຍລາຍງານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີຄົນ ກ່ຽວກັບການປັບປຸງໂຄງສ້າງທະນາຄານດັ່ງກ່າວ;
7. ໃຫ້ ສຳນັກງານຂໍ້ມູນຕ້ານການຟອກເງິນ ເອົາໃຈໃສ່ແກ້ໄຂວຽກງານຄົງຄ້າງບໍ່ວ່າຈະເປັນວຽກງານນິຕິກຳ, ການຈັດຕັ້ງປະຕິບັດວຽກຕົວຈິງ ເພື່ອຮັບປະກັນໃຫ້ ສປປ ລາວ ອອກຈາກບັນຊີເທົາໃນທ້າຍປີ 2016 ຫຼື ຕົ້ນປີ 2017;
8. ໃຫ້ຫ້ອງການ ທຫລ, ສຳນັກງານ ຄຄຊ, ສຳນັກງານຂໍ້ມູນຕ້ານການຟອກເງິນ ໃຫ້ຕິດຕາມຢ່າງໃກ້ຊິດກ່ຽວກັບການແຕ່ງຕັ້ງ ປະທານສະພາບໍລິຫານຂອງ ທຫລ ເພື່ອໃຫ້ຄົບອົງປະກອບຄົບຊຸດຕາມກົດໝາຍທີ່ໄດ້ກຳນົດໄວ້;
9. ບັນດາກົມທີ່ມີການຊັບຊ້ອນປັບປຸງການຈັດຕັ້ງໃໝ່ ໃຫ້ມີການແບ່ງງານຄວາມຮັບຜິດຊອບຄືນໃໝ່ຕາມຄວາມຮູ້ຄວາມສາມາດ ແລະ ເຜີຍແຜ່ໃຫ້ພະນັກງານໄດ້ຮັບຮູ້ ພ້ອມທັງລາຍງານຄວາມຮັບຜິດຊອບຄືນໃໝ່ໃຫ້ຄະນະຜູ້ວ່າການຊາບ;
10. ຕິດພັນກັບການສົ່ງມອບຂົວທ່າງ່ອນແມ່ນມອບໃຫ້ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ສົມທົບກັບຫ້ອງການ ທຫລ ເພື່ອສະຫຼຸບໃຫ້ໄດ້ຂໍ້ມູນ 1. ລາຍໄດ້ຈາກການເກັບໃນໄລຍະຜ່ານມາ; 2. ຄ່າໃຊ້ຈ່າຍໃນການ

ສ້ອມແປງແຕ່ລະໄລຍະ ແລະ 3. ຄ່າສິ້ນເປືອງໃນການດຳເນີນງານ ເມື່ອໄດ້ຂໍ້ມູນລະອຽດຄົບຖ້ວນແລ້ວ ຈຶ່ງແຈ້ງໄປຍັງພາກສ່ວນທີ່ກ່ຽວຂ້ອງຈັດປະຊຸມ ເພື່ອມອບ-ຮັບ ຂໍ້ວດັ່ງກ່າວ;

11. ການສະຫຼຸບການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມ 9 ເດືອນ, ຄາດຄະເນການຈັດຕັ້ງປະຕິບັດໝົດສົກປີ 2015-2016 ແລະ ສ້າງແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2017 ແມ່ນໃຫ້ຈັດຕັ້ງປະຕິບັດຕາມທິດທາງດຽວກັນຂອງກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ໂດຍມອບໝາຍໃຫ້ຫ້ອງການ ທຫລ ຈັດກອງປະຊຸມປຶກສາຫາລື ແລ້ວອອກແຈ້ງການກ່ຽວກັບການສະຫຼຸບ ແລະ ສ້າງແຜນປີ 2017 ໃຫ້ໄປໃນທິດທາງດຽວ ແລະ ເວລາຕາມປີປະຕິທິນນັບແຕ່ປີ 2017 ເປັນຕົ້ນໄປ.

ກອງປະຊຸມໄດ້ປິດລົງໃນ ເວລາ 11: 40 ໂມງ ໃນວັນດຽວກັນ.

ປະທານກອງປະຊຸມ

ຜູ້ບັນທຶກ

ດຣ ສິມພາວ ໄຟສິດ